ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

3471

---

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ.........../ກປ.

ນະຄອນຫຼວງວຽງຈັນ, ວັນທີ 05 OCT 2010

# ຄຳແນະນຳ
# ຂອງລັດຖະມົນຕີ
# ກ່ຽວກັບການຊຸກຍູ້ການບົວລະບັດເຂົ້ານາປີ ແລະ ການກະກຽມການຜະລິດລະດູແລ້ງ.

ເຖິງ: - ທ່ານຫົວໜ້າກົມ, ກອງ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.

- ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 35/ນຍ, ລົງວັນທີ 14 ສິງຫາ 2009 ກ່ຽວກັບການກະກຽມ ປ້ອງກັນ ແລະ ແກ້ໄຂຜົນກະທົບຈາກໄພທຳມະຊາດກັບການສົ່ງເສີມການຜະລິດກະສິກຳ.

ເພື່ອຍົກຜະລິດຕະພາບການຜະລິດລະດູຝົນ ໂດຍສະເພາະ ນາປີຮັບປະກັນຜົນຜະລິດໃຫ້ໄດ້ຕາມຄາດໝາຍທີ່ວາງໄວ້ ທັງເປັນການທົດແທນເນື້ອທີ່ທີ່ຖືກກະທົບ ແລະ ເສຍຫາຍ ແລະ ການກະກຽມໃຫ້ແກ່ການຜະລິດລະດູແລ້ງ ສົກປີ 2010-2011.

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ ດັ່ງນີ້:

1. ໃຫ້ກົມປູກຝັງສົມທົບກັບກົມຊົນລະປະທານ, ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຕ່ງຕັ້ງພະນັກງານລົງສົມທົບກັບແຂວງ ເພື່ອເອົາໃຈໃສ່ຕິດຕາມຊຸກຍູ້ການບົວລະບັດເຂົ້ານາປີ ປີນີ້ ໂດຍສະເພາະໃນເຂດທີ່ຮັບປະກັນການສະໜອງນ້ຳຊົນລະປະທານ ແນໃສ່ເພື່ອຍົກຜົນຜະລິດຕະພາບເຂົ້ານາປີໃຫ້ສູງຂຶ້ນ.
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ ເປັນເຈົ້າການແຕ່ງຕັ້ງພະນັກງານລົງ ຊຸກຍູ້ຊ່ວຍເຫຼືອປະຊາຊົນ ໂດຍເອົາໃຈໃສ່ບາງບັນຫາຮີບດ່ວນຄື ດັ່ງລຸ່ມນີ້:

- ສຳລັບທ້ອງຖິ່ນເຂດທີ່ບໍ່ໄດ້ຮັບຜົນກະທົບໄພພິບັດ ຊຶ່ງໄດ້ດຳເນີນການຜະລິດຢ່າງປົກກະຕິໃຫ້ເອົາໃຈໃສ່ບົວລະບັດຮັກສາ ແລະ ປ້ອງກັນຕົ້ນເຂົ້າຈາກການທຳລາຍຂອງສັດຕູພືດ ພ້ອມດຽວກັນກໍເອົາໃຈໃສ່ເກັບກ່ຽວມັດເຂົ້າດໍ, ເຂົ້າກາງເປັນຢ່າງດີ.
- ສຳລັບທ້ອງຖິ່ນເຂດທີ່ໄດ້ຮັບຜົນກະທົບໄພແລ້ງ ແລະ ນ້ຳຖ້ວມໃນຕົ້ນ ແລະ ການລະດູຝົນ ຊຶ່ງໄດ້ປັກດຳລ້າຊ້າໃນການຟື້ນຟູການຜະລິດນັ້ນໃຫ້ເອົາໃຈໃສ່ເປັນພິເສດ ຕໍ່ການບົວລະບັດເຄື່ອງປູກຂອງຝັງເປັນຕົ້ນການເສຍຫຍ້າຂ້າໜຸ່ນ ການໃສ່ຝຸ່ນ ການຮັກສານ້ຳໃນນາເຂົ້າ ໃນເຂດທີ່ມັກຂາດນ້ຳ, ໃຫ້ລະດົມປະຊາຊົນຂຸດໜອງຕາມຂະໜາດທີ່ເໝາະສົມ ຫຼື ຕັນຫ້ວຍຮ່ອງ ເພື່ອເກັບຮັກສານ້ຳຝົນໄວ້ໃຊ້ໃນຍາມສຸກເສີນ, ພ້ອມດຽວກັນກໍໃຫ້ກວດກາສ້ອມແປງລະບົບຊົນລະປະທານໃຫ້ຢູ່ໃນສະພາບຕຽມພ້ອມໃຊ້ການໄດ້ເວລາຕ້ອງການ.
- ໃນລະດູຝົນປີນີ້, ສະພາບດິນຟ້າອາກາດແມ່ນບໍ່ປົກກະຕິ. ສະນັ້ນ, ຄວນເອົາໃຈໃສ່ຕິດຕາມຢ່າງໃກ້ຊິດການແຈ້ງເຕືອນ ກ່ຽວກັບສະພາບການປ່ຽນແປງຂອງດິນຟ້າອາກາດ ເພື່ອກະກຽມຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນໃຫ້ທັນເວລາ.

3. ໄປຄຽງຄູ່ກັບການເອົາໃຈໃສ່ບົວລະບັດຮັກສາເຂົ້ານາປີ, ພ້ອມດຽວກັນກໍໃຫ້ເອົາໃຈໃສ່ກະກຽມການຜະລິດລະດູແລ້ງ ສົກປີ 2010-2011 ແຕ່ຫົວທີ.

- ໃຫ້ຄະນະຮັບຜິດຊອບຕ້ານໄພພິບັດປະຈຳແຕ່ລະພາກເປັນເຈົ້າການປະສານສົມທົບກັບ ກົມ, ກອງ, ສະຖາບັນ ແລະ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ກວດກາຄືນເຕັກນິກ ແລະ ວິທີການຕ່າງໆທີ່ໄດ້ທົດສອບ, ນຳໃຊ້ໃນທ້ອງຖິ່ນທີ່ສາມາດເພີ່ມຜະລິດຕະພາບເຂົ້າ ແລະ ພືດຢ່າງມີປະສິດທິຜົນ ເພື່ອສັງລວມເປັນເອກະສານຄູ່ມືຜັນຂະຫຍາຍກະເສດສຸມຢູ່ເຂດຊົນລະປະທານໃນແຕ່ລະທ້ອງຖິ່ນ ເພື່ອຍົກຜົນຜະລິດຕະພາບນັບແຕ່ລະດູນາແຊງ 2010-2011 ເປັນຕົ້ນໄປ.
- ໃຫ້ກົມປູກຝັງ, ກົມຊົນລະປະທານສົມທົບກັນກັບທ້ອງຖິ່ນກວດກາ ແລະ ຢັ້ງຢືນຄືນໂຄງການຊົນລະປະທານຕາມບັນຊີທີ່ກົມຊົນລະປະທານໄດ້ແຈ້ງໄວ້ ແລະ ເນື້ອທີ່ປູກເຂົ້າ ແລະ ພືດທີ່ຮັບປະກັນ. ສຳລັບເຮັດກະເສດສຸມໃນລະດູນາແຊງປີນີ້ ເພື່ອໃຫ້ການກະກຽມນາແຊງປີນີ້ເປັນຂະບວນຟົດຟື້ນໜັກແໜ້ນ.
- ໃຫ້ກົມປູກຝັງເປັນໃຈກາງປະສານສົມທົບກັບພາກສ່ວນ ກ່ຽວຂ້ອງຂັ້ນສູນກາງ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເພື່ອສັງລວມຄວາມຕ້ອງການຂາເຂົ້າກະສິກຳ (ຝຸ່ນ, ປຸ໋ຍ, ຢາ, ແນວພັນ ແລະ ອື່ນໆ...) ເພື່ອສະເໜີ ໃຫ້ພາກສ່ວນກ່ຽວຂ້ອງສາຍຕັ້ງ, ສາຍຂວາງ ພິຈາລະນາອຳນວຍຄວາມສະ ດວກ.
- ໃຫ້ກົມ, ກອງ, ສະຖາບັນ ແລະ ທ້ອງຖິ່ນ ຊີ້ນຳ, ຊຸກຍູ້ພະນັກງານທີ່ໄດ້ແຕ່ງຕັ້ງໃນ ຂໍ້ 1 ແລະ 2 ເພີ່ມທະວີຄວາມເອົາໃຈຢ່າງຕັ້ງໜ້າໃນການຈັດຕັ້ງຜັນຂະຫຍາຍເຕັກນິກ, ການບົວລະບັດກະເສດສຸມຍົກຜະລິດຕະພັນໃຫ້ຊາວກະສິກອນຢ່າງທົ່ວເຖິງ, ເປັນເຈົ້າການລົງເກັບກຳສະພາບລວມ ແລະ ທ່າແຮງຂອງທ້ອງຖິ່ນ ເພື່ອສ້າງເປັນແຜນການ ແລະ ຄັດເລືອກຜູ້ສະໝັກ ຫຼື ຄອບຄົວເປັນຕົວແບບຂອງບ້ານ, ກຸ່ມບ້ານ ໂດຍໃຫ້ມີການຈັດຕັ້ງການຝຶກອົບຮົມ, ສຳມະນາ, ແລກປ່ຽນບົດຮຽນ, ຕິດຕາມ, ຊຸກ

ຍູ້, ແນະນຳເຕັກນິກຢ່າງເປັນປະຈຳ ແລະ ຈັດຕັ້ງຊາວກະສິກອນຖອດຖອນບົດຮຽນກັບທີ່ທັງຮຽນທັງເຮັດ, ສ້າງ "ໂຮງຮຽນຊາວກະສິກອນ" ແລະ ອື່ນໆ ໂດຍໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງຂອງທ້ອງຖິ່ນ, ພ້ອມດຽວກັນກໍພະຍາຍາມເອົາເຕັກນິກ ດັ່ງກ່າວເຂົ້າໃນຫຼັກສູດຂອງສູນບໍລິການເຕັກນິກ ເພື່ອຊຸກຍູ້ສົ່ງເສີມການເຮັດກະເສດສຸມຍົກຜະລິດຕະພາບຢູ່ກຸ່ມບ້ານຢ່າງແຂງແຮງ.

4. ໃຫ້ທຸກພາກສ່ວນພ້ອມກັນດຳເນີນການກະກຽມຈັດຕັ້ງປະຕິບັດ ຄຳແນະນຳແຕ່ຫົວທີ ເພື່ອໃຫ້ໄດ້ລົງມືເຮັດກະເສດສຸມຍົກຜະລິດຕະພາບນັບແຕ່ລະດູນາປີ 2010 ເປັນຕົ້ນໄປລວມທັງນາແຊງ ສົກປີ 2010-2011, ພະແນກກະສິກຳ ແລະ ປ່າໄມ້ ຈົ່ງເປັນເຈົ້າການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ເປັນໄລຍະ ແລະ ໃຫ້ກົມປູກຝັງ, ກົມຊົນລະປະທານ ແລະ ກອງສົ່ງເສີມເປັນໃຈກາງໃນການຕິດຕາມ, ຊຸກຍູ້ ແລະ ວິໄຈບັນຫາຮອບດ້ານ ເພື່ອສັງລວມສະພາບການຈັດຕັ້ງປະຕິບັດການເຮັດກະເສດສຸມຍົກຜະລິດຕະພາບລາຍງານການນຳກະຊວງເປັນປົກກະຕິ. ພາຍຫຼັງເກັບກ່ຽວມັ່ງມັດແລ້ວໃຫ້ຈັດຕັ້ງສະຫຼຸບປະເມີນຜົນຖອດຖອນບົດຮຽນໃນນັ້ນໃຫ້ສັງລວມໄດ້ຜົນງານດີເດັ່ນຂອງພະນັກງານແຕ່ລະຂັ້ນ ແລະ ຄອບຄົວຊາວກະສິກອນຕົວແບບ ເພື່ອນຳສະເໜີ ຂັ້ນເທິງພິຈາລະນາຍ້ອງຍໍຢ່າງເໝາະສົມ ພ້ອມທັງວາງແຜນຊຸກຍູ້ ແລະ ຫັນເອົາວຽກນີ້ສ້າງເປັນໂຄງການ ແລະ ແຜນວຽກບູລິມະສິດຂອງຕົນຄືວຽກປົກກະຕິ ອື່ນໆ ເພື່ອຜັນຂະຫຍາຍໃນລະດູຕໍ່ໄປຢ່າງກ້ວາງຂວາງ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ເພື່ອເປັນບ່ອນອີງ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ສິດາເຮັ່ງ ຣາຊະພົນ

**ບ່ອນນຳສົ່ງ:**

- ຫ້ອງວ່າການສູນກາງພັກ 1 ສະບັບ (ເພື່ອຊາບ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ (ເພື່ອຊາບ).
- ຫ້ອງການເລຂາທິການລັດຖະບານ 1 ສະບັບ (ເພື່ອຊາບ).
- ຫ້ອງວ່າການປົກຄອງນະຄອນຫຼວງ/ແຂວງ ບ່ອນລະ 1 ສະບັບ (ເພື່ອຊາບ).
- ເກັບມ້ຽນ 1 ສະບັບ.